ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------໑000໑----------

# ກະຊວງ ໂຍທາທິການ ແລະ ຂົນສົ່ງ

## ຄະນະກຳມະການດັດສົມທຸລະກິດນ້ຳປະປາ
## ຂໍ້ຕົກລົງ (ສະບັບປັບປຸງໃໝ່)
## ວ່າດ້ວຍການ ແຕ່ງຕັ້ງຄະນະກຳມະການດັດສົມ ທຸລະກິດນ້ຳປະປາ

ເອກະສານປະກອບມີ:

1). ລາຍຊື່ຂອງຄະນະກຳມະການ

2). ພາລະບົດບາດ ຂອງ ຄະນະກຳມະການ

3). ພາລະບົດບາດ ຂອງ ຫ້ອງການດັດສົມນ້ຳປະປາ

4). ທີ່ຢູ່, ບ່ອນຕິດຕໍ່ພົວພັນ

WSRC
Water Supply Regulatory Committee

ນະຄອນຫຼວງວຽງຈັນ, 2012

# ຄະນະກຳມະການດັດສົມ ທຸລະກິດນ້ຳປະປາ



ທ່ານ ບຸນຈັນ ສິນທະວົງ, ລັດຖະມົນຕີຊ່ວຍວ່າການ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ປະທານ



ທ່ານ ຄຳພະວີ ໄທພະຈັນ,
ງ່າກົມເຄຫາ ແລະ ຜັງເມືອງ,
ຮອງປະທານ



ທ່ານ ບຸນໂຈມ ອຸບົນປະເສີດ, ຫົວໜ້າກົມ
ຄຸ້ມຄອງການເງິນ ລັດວິສາຫະກິດ, ກະຊວງ
ການເງິນ, ຮອງປະທານ



ທ່ານ ດຣ. ສົມພອນ ເດດອຸດົມ,
ຮອງປະທານ ສະພາວິທະຍາສາດ ແລະ
ເຕັກໂນໂລຊີ ກະຊວງ ຍທຂ,
ຮອງປະທານ



ທ່ານນາງ ວິໄລຄຳ ໂພສາລາດ,
ຫົວໜ້າ ສະຖາບັນ ໂຍທາ ແລະ ຂົນສົ່ງ
ເປັນຄະນະ, ຜູ້ຕາງໜ້າຜູ້ຊົມໃຊ້



ານ ດຣ. ດວງຈັນ ແກ້ວອາສາ,
ົວໜ້າກົມອະນາໄມ ແລະ ກັນພະ
ດ, ກະຊວງສາທາລະນະສຸກ
ເປັນຄະນະ



ທ່ານ ດຣ. ສອນເພັດ ອິນທະວົງ,
ຮອງຫົວໜ້າຫ້ອງການປັບປຸງທຸລະກິດ
ຫ້ອງວ່າການລັດຖະບານ, ເປັນຄະນະ



ທ່ານນາງ ກິນນະລີ ດາລາວົງ,
ຮອງເລຂາທິການສະພາການຄ້າ
ແລະ ອຸດສາຫະກຳແຫ່ງຊາດ,
ເປັນຄະນະ



ທ່ານ ສົມວັນ ມົງພະຈັນ, ຫົວໜ້າ
ຫ້ອງການດັດສົມນ້ຳປະປາ,
ຜູ້ປະຈຳການ, ຫົວໜ້າກອງເລຂາ



ນ ຄຳເຜີຍ ວົງສາຄຳຊຸຍ,
ວຍການລັດວິສາຫະກິດ
ປະປານະຄອນຫລວງ,
ເປັນຄະນະ



ທ່ານ ຄຳໝັ້ນ ວິສາເທບ,
ອຳນວຍການລັດວິສາຫະກິດ
ນ້ຳປະປາ ແຂວງຈຳປາສັກ,
ເປັນຄະນະ



ທ່ານ ພູມະດີ ທົງຈະເລີນ,
ອຳນວຍການ ລັດວິສາຫະກິດ
ນ້ຳປະປາ ແຂວງສະຫວັນນະເຂດ,
ເປັນຄະນະ



ທ່ານ ສຸລິດ ຈິນດາມະນີ,
ອຳນວຍການລັດວິສາຫະກິດ
ນ້ຳປະປາ ແຂວງຫຼວງພະບາງ,
ເປັນຄະນະ



ທ່ານ ເຈີຕົວ ກາຍົງມົວ,
ອຳນວຍການລັດວິສາຫະກິດ
ນ້ຳປະປາ ແຂວງອຸດົມໄຊ,
ເປັນຄະນະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

-----------000----------

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ ໔໗໑໑ / ຍທຂ

ນະຄອນຫຼວງວຽງຈັນ, ວັນທີ ໑໑ / 06 /2012

# ຂໍ້ຕົກລົງ
## ຂອງລັດຖະມົນຕີວ່າການ
## ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການດັດສົມທຸລະກິດນ້ຳປະປາ

- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 373/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ແລະ ສະບັບເລກທີ 191/ນຍ ລົງວັນທີ 01 ກໍລະກົດ 2005 ວ່າດ້ວຍ ການດັດສົມທຸລະກິດນ້ຳປະປາ.
- ອີງຕາມບົດບັກທຶກກອງປະຊຸມ ຄະນະກຳມະການດັດສົມທຸລະກິດນ້ຳປະປາ, ຄັ້ງທີ I ປະຈຳປີ 2012, ລົງວັນທີ 28/2/2012
- ອີງຕາມການສະເໜີຂອງກອງເລຂາຄະນະກຳມະການດັດສົມທຸລະກິດນ້ຳປະປາ ສະບັບເລກທີ 769/ຫດນປ, ລົງວັນທີ 06/04/2012.

## ລັດຖະມົນຕີວ່າການ ຕົກລົງ:

ມາດຕາ 1: ແຕ່ງຕັ້ງ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ຊຶ່ງປະກອບດ້ວຍ 14 ທ່ານດັ່ງລຸ່ມນີ້:

1. ທ່ານ ບຸນຈັນ ສິນທະວົງ, ລັດຖະມົນຕີຊ່ວຍວ່າການ, ເປັນປະທານ
2. ທ່ານ ຄຳທະວີ ໄທພະຈັນ, ຫົວໜ້າ ກົມເຄຫາ ແລະ ຜັງເມືອງ, ເປັນຮອງປະທານ
3. ທ່ານ ບຸນໂຈມ ອຸບົນປະເສີດ, ຫົວໜ້າກົມຄຸ້ມຄອງການເງິນ ລັດວິສາຫະກິດ, ກະຊວງການເງິນ, ເປັນຮອງປະທານ
4. ທ່ານ ດຣ ສົມພອນ ເດດອຸດົມ, ຮອງປະທານສະພາວິທະຍາສາດ ແລະ ເຕັກໂນໂລຊີ, ເປັນຮອງປະທານ
5. ທ່ານ ນາງ ວິໄລຄຳ ໂພສາລາດ, ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຫົວໜ້າສະຖາບັນໂຍທາ ແລະ ຂົນສົ່ງ. ເປັນຄະນະ
6. ທ່ານ ດຣ ດວງຈັນ ແກ້ວອາສາ, ຫົວໜ້າກົມອະນາໄມ ແລະ ປ້ອງກັນພະຍາດ, ກະຊວງ ສາທາລະນະສຸກ, ເປັນຄະນະ
7. ທ່ານ ດຣ ສອນເພັດ ອິນທະວົງ, ຮອງຫົວໜ້າຫ້ອງການ ຄະນະປັບປຸງທຸລະກິດແຫ່ງຊາດ, ຫ້ອງວ່າການລັດຖະບານ, ເປັນຄະນະ
8. ທ່ານ ນາງ ກົມມະລີ ດາລາວົງ, ຮອງເລຂາທິການສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ເປັນຄະນະ
9. ທ່ານ ສົມວັນ ມົງພະຈັນ, ຫົວໜ້າຫ້ອງການດັດສົມນ້ຳປະປາ, ເປັນຄະນະຜູ້ປະຈຳການ, ທັງເປັນຫົວໜ້າກອງເລຂາ
10. ທ່ານ ຄຳເພີຍ ວົງສາຄຳຊຸຍ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດນ້ຳປະປານະຄອນຫຼວງ, ເປັນຄະນະ
11. ທ່ານ ຄຳໝັ້ນ ວິສາເທບ, ຜູ້ອຳນວຍການລັດວິສາຫະກິດນ້ຳປະປາແຂວງຈຳປາສັກ, ເປັນຄະນະ
12. ທ່ານ ພູມະດີ ທົງຈະເລີນ, ຜູ້ອຳນວຍການລັດວິສາຫະກິດນ້ຳປະປາແຂວງສະຫວັນນະເຂດ, ເປັນຄະນະ
13. ທ່ານ ສຸລິດ ຈິນດາມະນີ, ຜູ້ອຳນວຍການລັດວິສາຫະກິດນ້ຳປະປາແຂວງຫຼວງພະບາງ, ເປັນຄະນະ
14. ທ່ານ ເຈືຕົວ ກາຍົງມົວ, ຜູ້ອຳນວຍການລັດວິສາຫະກິດນ້ຳປະປາແຂວງອຸດົມໄຊ. ເປັນຄະນະ

ມາດຕາ 2: ຄະນະກຳມະການດັດສົມ ມີສິດ ແລະໜ້າທີ່ ດັ່ງນີ້:

1. ກຳນົດນະໂຍບາຍ ແລະ ຊີ້ນຳລວມ ກ່ຽວກັບ ການດັດສົມທຸລະກິດນ້ຳປະປາ ໃນທົ່ວປະເທດ ໂດຍອີງໃສ່ ນະໂຍບາຍ ນ້ຳປະປາ ແຫ່ງຊາດ.
2. ພິຈາລະນາ ແລະ ໃຫ້ການຮັບຮອງເອົາ ແຜນການດັດສົມ ນ້ຳປະປາ ໃນແຕ່ລະໄລຍະ, ແຜນດຳເນີນງານ, ການນຳໃຊ້ພະນັກງານ, ການຝຶກອົບຮົມ, ງົບປະມານ ແລະ ແຜນການເງິນ ເພື່ອນຳສະເໜີໃຫ້ ທ່ານ ລັດຖະມົນຕີວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາ.
3. ກຳນົດ, ລະບຽບການ, ມາດຕະຖານສົມທຽບ ແລະ ຕົວຊີ້ວັດ ກ່ຽວກັບ ຜົນການປະຕິບັດວຽກງານ ທີ່ພົວພັນ ເຖິງບັນດາກິດຈະກຳ ດັດສົມທຸລະກິດນ້ຳປະປາ.
4. ປະຕິບັດໜ້າທີ່ວຽກງານ ຕາມການຊີ້ນຳ ຂອງ ທ່ານລັດຖະມົນຕີວ່າການ ກະຊວງ ຍທຂ ໃນແຕ່ລະໄລຍະ.
5. ຊີ້ນຳ, ຕິດຕາມກວດກາ ແລະ ຄວບຄຸມການເຄື່ອນໄຫວ ວຽກງານດັດສົມທຸລະກິດນ້ຳປະປາ.

ມາດຕາ 3: ຄະນະກຳມະການດັດສົມ ແມ່ນປະຊຸມກັນ 3 ເດືອນຕໍ່ຄັ້ງ ແລະ ສາມາດປະຊຸມສະໄໝສາມັນໄດ້ ຕາມຄວາມຈຳເປັນ ຂອງວຽກງານ ແຕ່ລະໄລຍະ; ໂດຍການຕົກລົງຂອງປະທານ ຄະນະກຳມະການດັດສົມ, ໂດຍແຜນຂອງ ກອງເລຂາ ຄະນະກຳມະການດັດສົມທຸລະກິດນ້ຳປະປາ ເປັນຜູ້ກະກຽມ.

ມາດຕາ 4: ກອງເລຂາ ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ແມ່ນຫ້ອງການດັດສົມນ້ຳປະປາ.

ມາດຕາ 5: ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງອຳນວຍຄວາມສະດວກ ໃຫ້ແກ່ຜູ້ຖືກແຕ່ງຕັ້ງ ເພື່ອປະຕິບັດວຽກງານ ໃຫ້ສຳເລັດຜົນ ເປັນຢ່າງດີ.

ມາດຕາ 6: ໃຫ້ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີວ່າການ

**ສົມມາດ ພົລເສນາ**

<u>ບ່ອນສົ່ງ:</u>

| | |
|---|---|
| – ຫ້ອງການກະຊວງການເງິນ | 1 ສະບັບ |
| – ຄະນະປັບປຸງທຸລະກິດແຫ່ງຊາດ | 1 ສະບັບ |
| – ຫ້ອງການກະຊວງ ສາທາລະນະສຸກ | 1 ສະບັບ |
| – ຫ້ອງວ່າການ ແຂວງຈຳປາສັກ | 1 ສະບັບ |
| – ຫ້ອງວ່າການ ແຂວງສະຫວັນນະເຂດ | 1 ສະບັບ |
| – ຫ້ອງວ່າການ ແຂວງຫຼວງພະບາງ | 1 ສະບັບ |
| – ຫ້ອງວ່າການ ແຂວງອຸດົມໄຊ | 1 ສະບັບ |
| – ຫ້ອງການ ກະຊວງ ຍທຂ | 1 ສະບັບ |
| – ບັນດາທ່ານຜູ້ຖືກແຕ່ງຕັ້ງທ່ານລະ | 1 ສະບັບ |
| – ສຳເນົາ | 2 ສະບັບ |